**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ກົມຈັດຕັ້ງ                                                                                    ເລກທີ 165 /ຈຕ

ນະຄອນຫຼວງວຽງຈັນ, ວັນທີ 19 ກຸມພາ 2026

# ໜັງສືແຈ້ງເຊີນປະມູນ

1. ກົມຈັດຕັ້ງ,ກະຊວງເຕັກໂນໂລຊີ ແລະ ການສື່ສານ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ທີ່ດຳເນີນກິດຈະການດ້ານອຸປະກອນໄອທີ ເຂົ້າຮ່ວມປະມູນ ຈັດຊື້-ຈັດຈ້າງ ສະໜອງອຸປະກອນເຄື່ອງຄອມພິວເຕີ ຮັບໃຊ້ວຽກງານ ຂອງຄະນະປະຈຳພັກ ກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການສະໜອງອຸປະກອນ ໄອທີ;
4. ບໍລິສັດ ໃດທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ຫ້ອງການກະຊວງ ຕສ, ຫ້ອງ 208 ຊັ້ນ 02, ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ) ໂທລະສັບ: 020-55580553, 021-21254243, ເຊິ່ງຈະເລີ່ມຂາຍຊອງແຕ່ວັນທີ 19 ກຸມພາ 2026 ເຖິງວັນທີ 25 ມີນາ 2026 (ໃນເວລາລັດຖະການ), ໃນລາຄາ 2,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 25 ມີນາ 2026 ທີ່ຫ້ອງ 208 ຊັ້ນ 02, ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ. ຊອງປະມູນໃດ ທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 09:10 ນາທີ ຂອງວັນດຽວກັນ, ໂດຍຊ້ອງໜ້າຄະນະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈເຂົ້າຮ່ວມນຳ;
6. ທຸກໆ ຊອງປະມູນຕ້ອງໄດ້ມີໜັງສືຄ້ຳປະກັນການປະມູນເປັນເງິນສົດ ຫຼື ແຊັກ (ວີຊ້າ) ບໍ່ໃຫ້ຫຼຸດ 2% (ສ່ອນຮ້ອຍ) ຂອງມູນຄ່າທີ່ສະເໜີເຂົ້າປະມູນ;
7. ທີ່ຢູ່: ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດ/ຫ້າງຮ້ານ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ຮອງຫົວໜ້າກົມຈັດຕັ້ງ**

**ຫົວໜ້າຄະນະຈັດຊື້**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ກົມຈັດຕັ້ງ

**ສີອາລຸນ ທຳມະວົງສາ**

ຕິດຕໍ່ປະສານງານ:

ໂທ: (020)55580553, (021)21254243.